## ແຫລ່ງຊ່ວຍເຫລືອ

ສຳລັບການສົ່ງຕໍ່ໄປຫາການບໍລິການທາງດ້ານກົດໝາຍໃນຣາຄາຕ່ຳ ຫລື ຟຣີ ຢູ່ໃນເຂດຂອງທ່ານ (ຖ້າທ່ານມີເງື່ອນໄຂໄດ້ຮັບ) ໂທຫາຣະບົບ Coordinated Legal Education, Advice and Referral (CLEAR) ສຳລັບຣັດວໍຊິງຕັນ:

**CLEAR**
888-201-1014
ຫລື ໄປທີ່: www.washingtonlawhelp.org

ກົດໝາຍ

- Uniform Interstate Family Support Act (UIFSA)
  RCW 26.21A
- Section 459A(a) of Title IV-D of the Social Security Act
  42.USC 659A(a)

ເພື່ອຈະຕິດຕໍ່ຫາຣັດອື່ນ ໄປທີ່:
www.acf.hhs.gov/programs/css

ສານ
www.courts.wa.gov/

**Division of Child Support**
www.dshs.wa.gov/dcs/

ອີເມລ໌
DCS-CRU@dshs.wa.gov

ຄຳຖາມກ່ຽວກັບເງິນລ້ຽງເດັກຕ່າງປະເທດ
ocseinternational@acf.hhs.gov

ຫລື

travel.state.gov

## ຫ້ອງການ Division of Child Support Offices:

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສຳນັກງານໃຫຍ່ | 800-457-6202<br>360-664-5000 |

ຖ້າຫາກວ່າທ່ານຢາກຈະເປີດສຳນວນເອກສານນຳ Division of Child Support, ທ່ານສາມາດຢ້ຽມຢາມຫ້ອງການເກັບເງິນລ້ຽງລູກທ້ອງຖິ່ນຂອງທ່ານ, ຕິດຕໍ່ຫາພວກເຮົາໄດ້ທີ່ເລກ 800-442-KIDS (5437), ຫລື ໄປຫາແວບໄຊທ໌ຂອງພວກເຮົາໄດ້ທີ່:
www.childsupportonline.wa.gov

Washington State
Department of Social & Health Services
*Transforming lives*

DSHS 22-616 LA (Rev. 5/16) Laotian

ໂຄງການເກັບເງິນລ້ຽງເດັກຂອງຣັດວໍຊິງຕັນ



# ການເກັບເອົາເງິນລ້ຽງເດັກ ຂ້າມຊາຍແດນຂອງຣັດ

Washington State
Department of Social & Health Services
*Transforming lives*

## ຂ້າພະເຈົ້າສາມາດເກັບເອົາເງິນລ້ຽງເດັກໄດ້ບໍ່ຖ້າຫາກວ່າພໍ່ແມ່ອີກຄົນນຶ່ງຢູ່ໃນຣັດອື່ນ?

ໄດ້. ເມື່ອເວລາພໍ່ແມ່ອີກຄົນນຶ່ງອາສັຍຢູ່ໃນຣັດອື່ນ Division of Child Support (DCS) ຈະສົ່ງໃບແຈ້ງການສຳລັບການກັກເອົາເງິນຄ່າແຮງ ງານ ແລະ ປະກັນພັຍພະຍາບານໄປຫານາຍຈ້າງໂດຍກົງໂລດ.

ບາງເທື່ອ, DCS ຈະຂໍເອົາຄວາມຊ່ວຍເຫລືອນຳຣັດອື່ນໃນການບັງຄັບໃຊ້ ຄຳສັ່ງຈ່າຍເງິນລ້ຽງເດັກ. ເມື່ອເວລາພວກເຮົາສົ່ງໃບສົ່ງຕໍ່ໄປຫາຣັດອື່ນ, ພວກເຮົາບໍ່ສາມາດບອກຣັດອື່ນວ່າຈະເຮັດວຽກນຳສຳນວນເອກສານ ແນວໃດ. ແຕ່ລະຣັດຈະມີກົດຫມາຍ ແລະ ນະໂຍບາຍກ່ຽວກັບເງິນລ້ຽງ ເດັກຂອງເຂົາເຈົ້າເອງ.

DCS ຍັງຈະສາມາດເກັບເອົາເງິນຈາກພໍ່ແມ່ຢູ່ໃນຣັດວໍຊິງຕັນອີກຄືກັນ ສຳລັບພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງຜູ້ທີ່ອາສັຍຢູ່ໃນຣັດອື່ນ.

## ຂ້າພະເຈົ້າຈະຮ້ອງຂໍເອົາການບໍຣິການຂອງ ້ົ່າສ ໄດ້ແນວໃດ?

ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອຂອງຫລວງຈາກຣັດວໍຊິງຕັນ, DCS ໄດ້ເຮັດວຽກແລ້ວທີ່ຈະເກັບເອົາເງິນລ້ຽງເດັກ. DCS ອາດຈະຮ້ອງຂໍໃຫ້ ທ່ານດັດແປງໃຫ້ທັນຕາມເວລາໃນຣາຍຣະອຽດກ່ຽວກັບທີ່ຢູ່ ຫລື ນາຍຈ້າງ ຂອງພໍ່ແມ່ອີກຄົນນຶ່ງ.

ຖ້າຫາກວ່າທ່ານເຊື່ອວ່າການກະທຳຂອງ DCS ສາມາດເປັນອັນຕະ ຣາຍສຳລັບທ່ານ ຫລື ເດັກນ້ອຍຢູ່ໃນຄອບຄົວຂອງທ່ານ, ຕິດຕໍ່ຫາຫ້ອງ ການບໍຣິການຊຸມນຸມຊົນເພື່ອຈະຂໍເອົາ "ເຫດຜົນດີທີ່ຈະບໍ່ຮ່ວມມືນຳ DCS".

ອີກຢ່າງນຶ່ງ, ຖ້າຫາກວ່າທ່ານຮູ້ສຶກວ່າການເປີດເຜີຍທີ່ຢູ່ຂອງທ່ານ ຫລື ຣາຍຣະອຽດແນວອື່ນໃຫ້ແກ່ອີກຝ່າຍນຶ່ງສາມາດເປັນອັນຕະຣາຍ, ໃຫ້ ບອກ DCS ຮູ້ຈັກນຳ ແລະພວກເຮົາສາມາດບອກຣັດອື່ນໃຫ້ເກັບຮັກສາ ຣາຍຣະອຽດນັ້ນບໍ່ໃຫ້ຮົ່ວໄຫລອອກມາ.

ຖ້າຫາກວ່າທ່ານບໍ່ໄດ້ຮັບການຊ່ວຍເຫລືອຂອງຫລວງ, DCS ຈະໃຫ້ການ ບໍຣິການບັງຄັບເກັບເງິນໃຫ້ທ່ານຕາມຄຳຮ້ອງຂໍເປັນລາຍລັກອັກສອນ. ທ່ານສາມາດເອົາຟອມໄດ້ຢູ່ທີ່ https://www.dshs.wa.gov/esa/faq?field_topic_value=childservice.



## ມັນຈະໃຊ້ເວລາດົນປານໃດເພື່ອຈະເກັບເອົາເງິນລ້ຽງເດັກຈາກຣັດອື່ນ?

ຖ້າຫາກວ່າ DCS ຮ້ອງຂໍເອົາຄວາມຊ່ວຍເຫລືອຈາກຣັດອື່ນ, ມັນອາດຈະ ໃຊ້ເວລາດົນນານກວ່າເພື່ອຈະກໍ່ຕັ້ງສຳນວນເອກສານຂອງທ່ານ. ສ່ວນ ປະກອບອື່ນໆທີ່ສາມາດເຮັດໃຫ້ຊັກຊ້າໃນການກໍ່ຕັ້ງສຳນວນເອກສານ ລວມເອົາການກະທຳໂດຍພໍ່ແມ່ອີກຝ່າຍນຶ່ງເຊັ່ນວ່າ:

- ການຍ້າຍຈາກວຽກນຶ່ງໄປຫາອີກວຽກນຶ່ງ.
- ການປ່ຽນບ່ອນຢູ່ອາສັຍຢູ່ເລື້ອຍໆ.
- ການກາຍເປັນຄົນວ່າງງານ ແລະ ບໍ່ໄດ້ຮັບເງິນວ່າງງານ.
- ການເຮັດວຽກເອົາເງິນສົດ.
- ວຽກງານສ່ວນຕົວ.
- ການຮັບເອົາເງິນຊ່ວຍເຫລືອຂອງຫລວງ.
- ການເຂົ້າຄຸກ ຫລື ສະຖານທີ່ດັດສ້າງ.
- ການອາສັຍຢູ່ໃນເຂດແດນສະງວນຂອງຊົນເຜົ່າອິນດຽນ.
- ການຮັບເອົາວຽກງານໂດຍຊົນເຜົ່າ, ບໍຣິສັດຂອງຊົນເຜົ່າ, ຫລື ກິຈການ ຄ້າທີ່ຄົນຊົນເຜົ່າອິນດຽນເປັນເຈົ້າຂອງຕັ້ງຢູ່ໃນເຂດແດນສະງວນຂອງ ຊົນເຜົ່າອິນດຽນ ຫລື ດິນແດນສະງວນ.

## ຖ້າຫາກວ່າຣັດອື່ນບໍ່ເປັນຜົນສຳເຣັດເດ?

ຢູ່ໃນທຸກໆກໍຣະນີ, ທັງສອງຣັດຈະດຳເນີນທີ່ຈະກວດເບິ່ງນຳແຫລ່ງຊ່ວຍ ເຫລືອຂອງຣັດຖະບານກາງ, ຣັດ,ແລະ ທ້ອງຖິ່ນ ຊອກເບິ່ງທີ່ຢູ່ ແລະ ຊັບສິນຂອງພໍ່ແມ່ອີກຄົນນຶ່ງ.

## ມີຄ່າເກັບເອົາເງິນນຳບໍ່ສຳລັບການບໍຣິການເຫລົ່ານີ້?

DCS ເກັບເອົາຄ່າທຳນຽມຊາວຫ້າ ($25) ດອນລາສຳລັບປີງົບປະມານ ຂອງຣັດຖະບານກາງແຕ່ລະປີ (ຣະຫວ່າງເດືອນອັກໂຕເບີ 1 ແລະ ເຊັບ ເທັມເບີ 30) ຖ້າຫາກວ່າພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງບໍ່ເຄີຍໄດ້ຮັບເງິນ TANF ຫລື AFDC ຈັກເທື່ອ, ແລະ ຖ້າຫາກວ່າ DCS ໄດ້ຊຳຣະເງິນ ອອກໄປ $500 ຫລື ຫລາຍກວ່າໃຫ້ຄອບຄົວຢູ່ໃນສຳນວນເອກສານໃນຣະ ຫວ່າງປີງົບປະມານ.

ຖ້າຫາກວ່າຣັດອື່ນຊ່ວຍເກັບເອົາເງິນລ້ຽງເດັກ, ຣັດນັ້ນອາດຈະເກັບເອົາ ເງິນຄ່າທຳນຽມ ຫລື ເກັບເອົາເງິນຄືນສຳລັບຄ່າຂອງການບໍຣິການຂອງ ເຂົາເຈົ້າ. ຣັດອາດຈະເກັບເອົາເງິນນຳພໍ່ແມ່ຜູ້ທີ່ຈ່າຍເງິນ ຫລື ພໍ່ແມ່ຜູ້ທີ່ ມີຄວາມຄຸ້ມຄອງ. ຣັດອາດຈະເອົາເງິນຄ່າທຳນຽມເຫລົ່ານີ້ອອກຈາກເງິນ ລ້ຽງເດັກທີ່ຖືກເກັບເອົາມາໄດ້ຈາກພໍ່ແມ່ຜູ້ທີ່ຈ່າຍເງິນ

## ຣັດອື່ນສາມາດປ່ຽນຈຳນວນເງິນລ້ຽງເດັກ ຫລື ຈຳນວນເງິນລ້ຽງເດັກຄືນຫລັງທີ່ພໍ່ແມ່ອີກຝ່າຍນຶ່ງຍັງຕິດຂ້າພະເຈົ້າຢູ່ໄດ້ ຫລື ບໍ່?

ຣັດຕ້ອງຮັບຮູ້ນັບຖືຄຳສັ່ງ, ຕາມທີ່ມັນໄດ້ຖືກຂຽນໄວ້, ໂດຍຣັດອື່ນ. ທຸກໆ ຣັດບັງຄັບໃຊ້ແຕ່ຄຳສັ່ງໃບດຽວເທົ່ານັ້ນສຳລັບຝ່າຍດຽວກັນ. ໃນທຸກໆເວ ລາ, ພໍ່ແມ່ຄົນໃດກໍໄດ້ສາມາດຍື່ນຄຳຟ້ອງຮ້ອງຂໍເອົາການດັດແປງໃນຈຳ ນວນເງິນລ້ຽງເດັກປະຈຳເດືອນ.

## ຂ້າພະເຈົ້າສາມາດເກັບເອົາເງິນລ້ຽງເດັກໄດ້ບໍ່ຖ້າຫາກວ່າພໍ່ແມ່ອີກຝ່າຍນຶ່ງອາສັຍຢູ່ໃນປະເທດອື່ນ?

ບາງເທື່ອ. DCS ມີສັນຍາຣະຫວ່າງປະເທດທີ່ອະນຸຍາດໃຫ້ພວກເຮົາ ທີ່ຈະເຮັດວຽກນຳປະເທດອື່ນຫລາຍໆປະເທດ. ເພື່ອຈະຖາມເບິ່ງກ່ຽວ ກັບຕ່າງປະເທດ, ກະຣຸນາໂທຫາພວກເຮົາໄດ້ທີ່ເລກ 1-800-457-6202.

## ຂ້າພະເຈົ້າບໍ່ມີຄຳສັ່ງເກັບເງິນລ້ຽງເດັກ. ຂ້າພະເຈົ້າຈະໄດ້ໃບນຶ່ງແນວໃດ?

ຄຳສັ່ງເກັບເງິນລ້ຽງເດັກຈະຖືກເຮັດຂື້ນມາຖ້າຫາກວ່າພໍ່ແມ່ອີກຄົນນຶ່ງບໍ່ອາສັຍຢູ່ທີ່ນີ້, ເພື່ອຈະໄດ້ຮັບໃບຄຳຮ້ອງຂໍເອົາການບໍຣິການບັງຄັບເກັບເງິນລ້ຽງເດັກ, ໂທຫາ 800-442-KIDS (5437) ຫລື ໂທຫາຫ້ອງ ການໃກ້ບ້ານທ່ານທີ່ສຸດທີ່ຖືກບົ່ງຢູ່ທາງດ້ານຫລັງຂອງປື້ມຄູ່ມືຫົວນີ້ ຫລື ທາງອອນລາຍນ໌ຢູ່ທີ່: http://www.dshs.wa.gov/esa/child-support-find-an-office.

## ຣາຍຣະອຽດທຸກໆຢ່າງຢູ່ໃນບັນທຶກຂອງແມ່ນເປັນຄວາມລັບ

ທ່ານສາມາດໃຫ້ຄົນໃດຄົນນຶ່ງ (ພີ່ນ້ອງ, ຫມູ່ເພື່ອນ ຫລື ຜູ້ຕາງຫນ້າ ຕາມກົດຫມາຍ) ໂທຫາ DCS ໃນນາມຂອງທ່ານ. ພວກເຮົາສາມາດ ຕອບຄຳຖາມທົ່ວໄປສຳລັບທຸກໆຄົນ, ແຕ່ວ່າພວກເຮົາບໍ່ສາມາດເວົ້າລົມ ຣາຍຣະອຽດກ່ຽວກັບສຳນວນເອກສານອັນເຈາະຈົງນອກຈາກວ່າພວກ ເຮົາມີຄຳອະນຸຍາດເປັນລາຍລັກອັກສອນຂອງທ່ານ.